# ຂໍ້ມູນກ່ຽວກັບຄໍາສັ່ງການປິ່ນປົວລ່ວງໜ້າ (Advance Directives)

ຂໍ້ມູນຕໍ່ໄປນີ້ອະທິບາຍວ່າ ຄໍາສັ່ງການປິ່ນປົວລ່ວງໜ້າແມ່ນຫຍັງ ແລະ ສິດຕ່າງໆທີ່ກ່ຽວຂ້ອງຂອງທ່ານ. ຂໍ້ມູນນີ້ແມ່ນສະໜອງໃຫ້ແກ່ທ່ານ ເພື່ອເປັນບ່ອນອີງເທົ່ານັ້ນ. ມັນບໍ່ມີຈຸດປະສົງເປັນຄໍາແນະນໍາທາງດ້ານກົດໝາຍ.

ຖ້າທ່ານມີຄໍາສັ່ງການປິ່ນປົວລ່ວງໜ້າຢູ່ແລ້ວ, ມັນກໍຈະເປັນຄວາມຮັບຜິດຊອບຂອງທ່ານ ຫຼື ຜູ້ຕາງໜ້າທີ່ໄດ້ຮັບອະນຸຍາດຂອງທ່ານ ທີ່ຈະແຈ້ງໃຫ້ຜູ້ໃຫ້ບໍລິການສ່ວນຕົວ (IP) ຊາບ ກ່ຽວກັບຄໍາສັ່ງການປິ່ນປົວລ່ວງໜ້າເຫຼົ່ານັ້ນ. ຖ້າທ່ານປ່ຽນແປງຄໍາສັ່ງການປິ່ນປົວລ່ວງໜ້າຂອງທ່ານ, ທ່ານຈະຕ້ອງບອກ IP ຂອງທ່ານໃນທັນທີ. ກະລຸນາຕິດຕໍ່ຫາທີມງານ CDWA ຖ້າທ່ານມີຄໍາສັ່ງການປິ່ນປົວລ່ວງໜ້າແລ້ວ <u>ແລະ</u> ຢາກໃຫ້ພວກເຮົາບັນທຶກເອກະສານນີ້ໄວ້ໃນບັນທຶກຂອງພວກເຮົາ.

## ຄໍາສັ່ງການປິ່ນປົວລ່ວງໜ້າແມ່ນຫຍັງ?

- ຄໍາສັ່ງການປິ່ນປົວລ່ວງໜ້າ ແມ່ນເອກະສານຖືກຕ້ອງຕາມກົດໝາຍ. ເຊິ່ງອະນຸຍາດໃຫ້ທ່ານສະແດງຄວາມປາດຖະໜາ ຂອງທ່ານກ່ຽວກັບປະເພດການປິ່ນປົວທາງການແພດທີ່ທ່ານຕ້ອງການ. ເອກະສານເຫຼົ່ານີ້ບາງຢ່າງ ອະນຸຍາດໃຫ້ທ່ານແຕ່ງຕັ້ງບຸກຄົນທີ່ທ່ານໄວ້ວາງໃຈໄດ້ ເຊິ່ງຈະມີຄວາມສາມາດໃນການຕັດສິນໃຈກ່ຽວກັບການຮັກສາປິ່ນປົວໃນນາມຂອງທ່ານ. ຄໍາສັ່ງການປິ່ນປົວລ່ວງໜ້າ ມີສອງປະເພດຫຼັກຄື: ພິໄນກໍາຊີວິດ (Living Wills) ແລະ ໃບມອບສິດທີ່ຍັງໃຊ້ໄດ້ຫຼັງຈາກຜູ້ມອບສິດໝົດສະພາບ (Durable Powers of Attorney) ສໍາລັບການຮັກສາປິ່ນປົວ.

## ສິດຕ່າງໆຂອງຂ້າພະເຈົ້າມີຫຍັງແດ່?

- ທ່ານມີສິດໃຫ້ຄໍາແນະນໍາເປັນລາຍລັກອັກສອນ ຫຼື ປາກເປົ່າ ກ່ຽວກັບການຮັກສາປິ່ນປົວຂອງທ່ານ. ເຊິ່ງລວມທັງສິດໃນການຍອມຮັບ ຫຼື ປະຕິເສດການປິ່ນປົວທາງການແພດ ຫຼື ການຜ່າຕັດ ໃນຂອບເຂດທີ່ໄດ້ຮັບການອະນຸຍາດຈາກກົດໝາຍຂອງລັດ. ນອກຈາກນັ້ນແລ້ວ, ທ່ານຍັງມີສິດແຕ່ງຕັ້ງບຸກຄົນທີ່ທ່ານໄວ້ວາງໃຈ ເພື່ອທໍາການຕັດສິນໃຈກ່ຽວກັບການປິ່ນປົວໃຫ້ແກ່ທ່ານ ໃນກໍລະນີທີ່ທ່ານບໍ່ສາມາດຕັດສິນໃຈດ້ວຍຕົນເອງໄດ້. <u>ທ່ານບໍ່ຈໍາເປັນຕ້ອງໄດ້ໃຊ້ສິດຕ່າງໆເຫຼົ່ານີ້</u>.

## ຜົນປະໂຫຍດຂອງ ຄໍາສັ່ງການປິ່ນປົວລ່ວງໜ້າ ມີຫຍັງແດ່?

- ຖ້າທ່ານກາຍເປັນບຸກຄົນທີ່ບໍ່ມີຄວາມສາມາດຕັດສິນໃຈກ່ຽວກັບການປິ່ນປົວດ້ວຍຕົນເອງໄດ້, ແລ້ວກໍຈະຕ້ອງໄດ້ມີການຕັດສິນໃຈເຫຼົ່ານັ້ນໃຫ້ແກ່ທ່ານ. ຖ້າທ່ານບໍ່ໄດ້ໃຫ້ຄໍາແນະນໍາໄວ້ລ່ວງໜ້າ, ຈະບໍ່ມີໃຜຮູ້ເປັນທີ່ແນ່ນອນວ່າ ສິ່ງທີ່ທ່ານຕ້ອງການແມ່ນຫຍັງ. ຄໍາສັ່ງການປິ່ນປົວລ່ວງໜ້າ ໃຫ້ໂອກາດແກ່ທ່ານໃນການອະທິບາຍຄວາມປາດຖະໜາຂອງທ່ານໄວ້ລ່ວງໜ້າ.

## ຂ້າພະເຈົ້າຈະໝັ້ນໃຈໄດ້ແນວໃດວ່າ ຄໍາສັ່ງການປິ່ນປົວລ່ວງໜ້າ ຂອງຕົນໄດ້ຮັບການເຄົາລົບ?

- ແບ່ງປັນສະບັບສໍາເນົາ ແລະ ບອກໃຫ້ແກ່ຄົນທີ່ທ່ານຮັກ, ຄອບຄົວ ແລະ ຜູ້ອື່ນໆ ທີ່ຈະມີສ່ວນຮ່ວມໃນການປິ່ນປົວຂອງທ່ານຮູ້. ຂໍໃຫ້ທ່ານໝໍທຸກຄົນຂອງທ່ານໃສ່ຄໍາສັ່ງການປິ່ນປົວລ່ວງໜ້າ ຂອງທ່ານເຂົ້າໄປໄວ້ໃນບັນທຶກການປິ່ນປົວຂອງທ່ານ.

## ນະໂຍບາຍຂອງເຄືອຂ່າຍການດູແລຜູ້ບໍລິໂພກໂດຍກົງແຫ່ງກຸງວໍຊິງຕັນ ກ່ງວກັບຄຳສັ່ງການປິ່ນປົວລ່ວງໜ້າ ມີຫຍັງແດ່?

- ເມື່ອໄດ້ຮັບການລາຍງານ, CDWA ຈະບັນທຶກເອກະສານໄວ້ ຖ້າທ່ານມີຄຳສັ່ງການປິ່ນປົວລ່ວງໜ້າແລ້ວ. ຖ້າທ່ານມອບສະບັບສຳເນົາຂອງຄຳສັ່ງການປິ່ນປົວລ່ວງໜ້າຂອງທ່ານໃຫ້ແກ່ພວກເຮົາ, ມັນກໍຈະຖືກເກັບຮັກສາໄວ້ຢູ່ໃນແຟ້ມເອກະສານຂອງທ່ານ. ມັນເປັນນະໂຍບາຍຂອງພວກເຮົາທີ່ຈະປະຕິບັດຕາມຄຳແນະນຳໃນຄຳສັ່ງການປິ່ນປົວລ່ວງໜ້າຂອງທ່ານ ໃນຂອບເຂດຂອງກົດໝາຍຂອງລັດ ແລະ ລັດຖະບານກາງ. CDWA ບໍ່ມີການຈຳແນກລູກຄ້າຄົນໃດໜຶ່ງ ໂດຍອີງໃສ່ການເລືອກຂອງຜູ້ກ່ງວ ກ່ງວກັບຄຳສັ່ງການປິ່ນປົວລ່ວງໜ້າ.